**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

====000====

ທະນາຄານແຫ່ງ ສປປ ລາວ
ກົມຈັດຕັ້ງແລະພະນັກງານ

ເລກທີ 01 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 04 JAN 2017

ສຳນັກງານ ຄຄຊ
ເລກທີ 0009
ວັນທີ 04 JAN 2017
ໂທລະສັບ 021 217770

# ແຈ້ງການ

**ເຖິງ:** ທ່ານ ຫົວໜ້າກົມ ແລະ ທຽບເທົ່າພາຍໃນ ທະນາຄານແຫ່ງ ສປປ ລາວ.

**ເລື່ອງ:** ການປັບປຸງການຈັດຕັ້ງຢູ່ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

- ອີງຕາມພາລະບົດບາດຂອງກົມຈັດຕັ້ງແລະພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 923/ທຫລ ລົງວັນທີ 10/11/2014;
- ອີງຕາມຂໍ້ຕົກລົງຂອງຜູ້ວ່າການ ທຫລ ວ່າດ້ວຍການຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານ.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນໄລຍະເດືອນ 12/2016 ຜ່ານມາ, ຂັ້ນເທິງໄດ້ປັບປຸງການຈັດຕັ້ງຂັ້ນຄະນະພະແນກ, ຄະນະກົມ ຢູ່ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ; ເພື່ອຄວາມສະດວກໃນການພົວພັນປະສານງານວຽກງານທີ່ກ່ຽວຂ້ອງ, ກົມຈັດຕັ້ງແລະພະນັກງານ ຈຶ່ງແຈ້ງມາຍັງທ່ານຊາບ ຕໍ່ການປັບປຸງການຈັດຕັ້ງດັ່ງກ່າວ, ລາຍລະອຽດດັ່ງນີ້:

**I. ກົມເຕັກໂນໂລຊີຂໍ້ມູນຂ່າວສານ.**

1. ແຕ່ງຕັ້ງ **ທ່ານ ໄຊ່ແກ້ວ ຫຼວງສີວິໄລ** ຮອງຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ ເປັນຮັກສາການຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ;

2. ແຕ່ງຕັ້ງ **ທ່ານ ພຸດສາລາ ອິນດາລາ** ຫົວໜ້າພະແນກຄຸ້ມຄອງບັດທະນາຄານ ເປັນຮອງຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ;

3. ຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ລັດສະໝີ ສຸວັນທອງ** ຫົວໜ້າພະແນກໄອທີ, ຕະຫຼາດຫຼັກຊັບລາວ ເປັນຮອງຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ;

4. ຍົກຍ້າຍ **ທ່ານ ຄຳນ້ອຍ ໄຊຍະສີ** ຮັກສາການຫົວໜ້າພະແນກພັດທະນາໂປຼແກຼມ, ກົມເຕັກໂນໂລຊີຂໍ້ມູນຂ່າວສານ ໄປຮັບໜ້າທີ່ໃໝ່ຢູ່ຕະຫຼາດຫຼັກຊັບລາວ;

5. ຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ນ. ລຳພອນ ສີມມະໄລວົງ** ຫົວໜ້າພະແນກຈັດຕັ້ງແລະບໍລິຫານ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຫົວໜ້າພະແນກພັດທະນາໂປຼແກຼມ, ກົມເຕັກໂນໂລຊີຂໍ້ມູນຂ່າວສານ;

6. ຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ນ. ນິວະສອນ ມາລາທິບ** ຮອງຫົວໜ້າພະແນກພັດທະນາໂປຼແກຼມ ເປັນຮັກສາການຫົວໜ້າພະແນກຄຸ້ມຄອງບັດທະນາຄານ, ກົມເຕັກໂນໂລຊີຂໍ້ມູນຂ່າວສານ.

**II. ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.**

1. ຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ນ. ວຽງວັນລີ ເລືອງວັນໄຊ** ເລຂານຸການທ່ານ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຮັກສາການຫົວໜ້າພະແນກຈັດຕັ້ງແລະບໍລິຫານ, ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພືອພັນວຽກງານກ່ຽວຂ້ອງກັບພວກກ່ຽວຕາມລະບຽບການ.

**ຮອງຫົວໜ້າກົມຈັດຕັ້ງແລະພະນັກງານ**

ທະນາຄານແຫ່ງ ສ. ປ. ປ. ລາວ ກົມຈັດຕັ້ງແລະພະນັກງານ

**ເສີມທະວີ ສີຫາຜົນ**